ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ 285 /ຈຂ.ຊຍ

ໄຊຍະບູລີ, ວັນທີ 21 / 3 /2019

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາ ສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III ໝວດທີ 4 ມາດຕາ 20 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012 ພາກທີ IV ໝວດທີ 5 ມາດຕາ 77 ວ່າດ້ວຍ ການສ້າງຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ຄວາມປອດໄພດ້ານເຕັກໂນໂລຊີ ຊີວະພາບ ສະບັບເລກທີ 39/ສພຊ, ລົງວັນທີ 18 ທັນວາ 2013 ແລະ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ ສະບັບເລກທີ 18/ສພຂ.ຊຍ ລົງວັນທີ 1 ກຸມພາ 2019.

### ເຈົ້າແຂວງໄຊຍະບູລີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ, ຂອບເຂດຄວາມຮັບຜິດຊອບ ກ່ຽວກັບການຄຸ້ມຄອງ, ການພັດທະນາ, ການອະນຸລັກ, ການປົກປັກຮັກສາ ແລະ ການນຳໃຊ້ເນື້ອທີ່ສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ ເພື່ອແນໃສ່ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະຍາວ ໂດຍສະເພາະແມ່ນແຜນພັດທະນາວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີຂອງແຂວງ ໃຫ້ປະກົດຜົນເປັນຈິງ ໃນການປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ ແລະ ພືດພັນນາໆຊະນິດໃຫ້ຍືນຍົງ; ສ້າງເປັນແຫຼ່ງທ່ອງທ່ຽວຂອງເມືອງ ຂອງແຂວງ; ເປັນສະຖານທີ່ຄົ້ນຄວ້າວິໄຈ ຂອງນັກຄົ້ນຄວ້າ, ນັກວິໄຈ, ນັກຮຽນ, ນັກສຶກສາ ໃນການຊອກຮູ້ ສຶກສາຮ່ຳຮຽນ.

**ມາດຕາ 2 ນິຍາມ**

ສວນອຸທິຍານພຶກສາສາດ ແມ່ນພື້ນທີ່ສະຫງວນໄວ້ ເພື່ອຄຸ້ມຄອງ, ພັດທະນາ, ອະນຸລັກ, ປົກປັກຮັກສາຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ ແລະ ພືດພັນນາໆຊະນິດ ຕະຫຼອດຮອດທິວທັດທຳມະຊາດທີ່ສວຍງາມ ທີ່ມີຢູ່ດັ້ງເດີມມາແລ້ວ ໃຫ້ຄົງຢູ່, ບໍ່ໃຫ້ຖືກທຳລາຍ ຫຼື ຖືກໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ ເພື່ອຮັກສາຊັບສົມບັດຂອງທຳມະຊາດ ໄວ້ໃຫ້ຄົນລຸ້ນຫຼັງໄດ້ສຶກສາຄົ້ນຄວ້າ, ປົກປັກຮັກສາທຳມະຊາດຕະຫຼອດໄປ.

**ມາດຕາ 3 ການອະທິບາຍຄຳສັບ**

1. ຊີວະນາໆພັນ ແມ່ນ ຄວາມຫຼາກຫຼາຍຂອງຊະນິດ ພັນພືດ, ສັດ ແລະ ຈຸລິນຊີ ຢູ່ໃນເຂດທຳມະຊາດໃດໜຶ່ງ.
2. ລະບົບນິເວດ ແມ່ນສາຍພົວພັນລະຫວ່າງ ສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ.
3. ປ່າໄມ້ທຳມະຊາດ ແມ່ນປ່າໄມ້ທີ່ມີພັນໄມ້ ແລະ ເຄື່ອງປ່າຂອງດົງ ເກີດຂຶ້ນ ແລະ ຂະຫຍາຍພັນດ້ວຍຕົວມັນເອງຕາມທຳມະຊາດເປັນຕົ້ນຕໍ.
4. ຊັບພະຍາກອນປ່າໄມ້ ໝາຍເຖິງຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ເຊິ່ງປະກອບດ້ວຍດິນ, ນ້ຳ, ພືດພັນ, ຕົ້ນໄມ້, ສັດນ້ຳ-ສັດປ່າ ແລະ ອື່ນໆ ທີ່ມີທັງໝົດຢູ່ໃນເຂດທີ່ດິນປ່າໄມ້.
5. ຜະລິດຕະຜົນ ໝາຍເຖິງເຄື່ອງປ່າຂອງດົງປະເພດຕ່າງໆທີ່ເກີດຂຶ້ນຢູ່ຕາມທຳມະຊາດ ຊຶ່ງອາດຈະເປັນ ຕົ້ນ,ລຳ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງໄມ້, ເຫັດ,ນ້ຳເຜິ້ງ ແລະ ອື່ນໆ.
6. ເຂດເຊື່ອມຕໍ່ ໝາຍເຖິງບໍລິເວນທີ່ດິນປ່າໄມ້ ອ້ອມຮອບຂອບເຂດບໍລິເວນທີ່ດິນສວນອຸທິຍານພຶກສາສາດ ເພື່ອປ້ອງກັນການບຸກລຸກໂດຍກົງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ, ການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ທີ່ກ່ຽວຂ້ອງກັບການຄຸ້ມຄອງ, ການພັດທະນາ, ການອະນຸລັກ, ການປົກປັກຮັກສາ ແລະ ຊົມໃຊ້ສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ.

**ມາດຕາ 5 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນການຄຸ້ມຄອງ, ພັດທະນາ, ອະນຸລັກ ແລະ ປົກປັກຮັກສາ ສວນອຸທິຍານພຶກສາສາດ ດ້ວຍການແລກປ່ຽນບົດຮຽນການຄົ້ນຄວ້າ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການສ້າງຊັບພະຍາກອນມະນຸດ, ການຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ທຶນຮອນ ລວມທັງການປະຕິບັດສົນທິສັນຍາ ແລະ ອື່ນໆ.

## ໝວດທີ 2
## ການຄຸ້ມຄອງ, ກວດກາ ແລະ ປົກປັກຮັກສາ

**ມາດຕາ 6 ການຄຸ້ມຄອງສວນອຸທິຍານພຶກສາສາດ**

1) ການຄຸ້ມຄອງ ແລະ ປົກປັກຮັກສາສວນອຸທິຍານພຶກສາສາດ ເປັນວຽກງານອະນຸລັກ, ປົກປັກຮັກສາ ເປັນສຳຄັນ;
2) ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ເປັນໃຈກາງປະສານງານກັບພະແນກທີ່ກ່ຽວຂ້ອງ ຄົ້ນຄວ້າລະບຽບການຕ່າງໆ ໃນການນຳໃຊ້ທີ່ດິນສວນພຶກສາສາດ ແລ້ວນຳສະເໜີຕໍ່ອົງການປົກຄອງແຂວງ;
3) ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ ແລະ ພາກສ່ວນທີ່ນຳໃຊ້ ໄດ້ຮັບໝາກຜົນ ມີໜ້າທີ່ປົກປັກຮັກສາສວນອຸທິຍານພຶກສາສາດ.

ມາດຕາ 7 ການດຳເນີນທຸລະກິດໃນຂອບເຂດສວນອຸທິຍານພຶກສາສາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດໃນຂອບເຂດສວນອຸທິຍານພຶກສາສາດ ຕ້ອງໄດ້ຮັບຄວາມເຫັນດີ ຈາກຄະນະກຳມະການຄຸ້ມຄອງສວນອຸທິຍານພຶກສາສາດ ແລະ ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ເຊັ່ນ: ການກ້າເບ້ຍໄມ້, ການປູກໄມ້ ແລະ ເຄື່ອງປ່າຂອງດົງ, ການທ່ອງທ່ຽວ.

1) ການກ້າເບ້ຍໄມ້ ແມ່ນດຳເນີນການກ້າເບ້ຍໄມ້ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ການພັດທະນາປ່າໄມ້;
2) ການປູກໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງດຳເນີນໃນສະຖານທີ່ກຳນົດໃຫ້ ແລະ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບຫຼັກການ;
3) ການທ່ອງທ່ຽວທຳມະຊາດ ແມ່ນດຳເນີນທຸລະກິດການທ່ອງທ່ຽວທຳມະຊາດ ໃນເຂດທົດສອບງານ, ຊີວະນາໆພັນ ໃນຂອບເຂດສວນອຸທິຍານພຶກສາສາດ ຕາມທີ່ໄດ້ຈັດສັນໃຫ້ ແລະ ບໍ່ສົ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ.

ມາດຕາ 8 ການຕິດຕາມກວດກາ ແລະ ຮູບການກວດກາ

ການຕິດຕາມກວດກາ ແມ່ນຄະນະກຳມະການຄຸ້ມຄອງສວນອຸທິຍານພຶກສາສາດ ປະສານສົມທົບກັບອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການກວດກາຢູ່ພາຍໃນ ແລະ ອ້ອມຮອບສວນອຸທິຍານພຶກສາສາດ.

ຮູບການກວດກາ ຕາມປົກກະຕິແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ, ກວດກາແບບກະທັນຫັນ, ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ.

ມາດຕາ 9 ການປົກປັກຮັກສາສວນອຸທິຍານພຶກສາສາດ

ການປົກປັກຮັກສາສວນອຸທິຍານພຶກສາສາດ ແມ່ນເພື່ອປົກປັກຮັກສາ, ຟື້ນຟູປ່າໃຫ້ກາຍເປັນເຂດສີຂຽວ, ເປັນມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ກາຍເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ຍືນຍົງ; ບຸກຄົນ, ນິຕິບຸກຄົນ ທີ່ໄດ້ນຳໃຊ້ເນື້ອທີ່ດິນເຂົ້າໃນການຜະລິດ, ໄດ້ປູກໄມ້ອຸດສາຫະກຳ ແລະ ໄມ້ໃຫ້ໝາກ ຢູ່ໃນຂອບເຂດສວນອຸທິຍານພຶກສາສາດແຫ່ງນີ້ ແມ່ນອະນຸຍາດໃຫ້ສືບຕໍ່ປົກປັກຮັກສາໄມ້ປູກຂອງຕົນໃຫ້ກາຍເປັນປ່າສີຂຽວ ແລະ ສາມາດຊົມໃຊ້ຜົນຜະລິດໄດ້ຕາມເງື່ອນໄຂຕົວຈິງ. ຖ້າຢາກບຸກເບີກ ຫຼື ຂະຫຍາຍເນື້ອທີ່ ຕ້ອງໄດ້ຮັບການອະນຸຍາດຈາກຄະນະກຳມະການຄຸ້ມຄອງສວນອຸທິຍານພຶກສາສາດຂອງແຂວງ.

ມາດຕາ 10 ການຈັດສັນແບ່ງເຂດໃນສວນອຸທິຍານພຶກສາສາດ

ສວນອຸທິຍານພຶກສາສາດຂອງແຂວງ ໄດ້ກຳນົດ ແລະ ຈັດສັນໃຫ້ມີເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງນຳໃຊ້, ເຂດເຊື່ອມຕໍ່ສວນອຸທິຍານກັບປ່າປະເພດອື່ນ ດັ່ງນີ້:

1) ເຂດຫວງຫ້າມເດັດຂາດ ແມ່ນເຂດປ່າໄມ້ເຊິ່ງເປັນບ່ອນອາໄສຫາກິນ ແລະ ຂະຫຍາຍພັນຕົ້ນຕໍຂອງສັດປ່າ, ເປັນບ່ອນທີ່ມີພັນພືດຈຳນວນຫຼວງຫຼາຍ ແລະ ດົກໜາ. ໃນເຂດນີ້ ບໍ່ອະນຸຍາດໃຫ້ດຳເນີນກິດຈະການປ່າໄມ້, ເກັບກູ້ຜະລິດຕະພັນປ່າໄມ້ ຫຼື ເຂົ້າໄປດຳເນີນກິດຈະການໃດໆ ຢ່າງເດັດຂາດ;
2) ເຂດຊົມໃຊ້ຊັບພະຍາກອນປ່າໄມ້ ແມ່ນບໍລິເວນປ່າທີ່ອະນຸຍາດໃຫ້ປະຊາຊົນຊົມໃຊ້ໄມ້ສຳລັບໃຊ້ສອຍໃນຄອບຄົວ, ການເກັບກູ້ເຄື່ອງປ່າຂອງດົງແບບຍືນນານ ແລະ ການລ່າສັດນ້ຳ-ສັດປ່າ ປະເພດບໍ່ຫວງຫ້າມຖືກຕ້ອງຕາມລະດູການ ແລະ ບໍ່ມີລັກສະນະດັບສູນ;
3) ເຂດທຳການຜະລິດກະສິກຳ ແມ່ນເຂດທີ່ປະຊາຊົນພາຍໃນບ້ານ ທີ່ມີສິດນຳໃຊ້ທີ່ດິນ ທີ່ນອນຢູ່ໃນຂອບເຂດສວນອຸທິຍານພຶກສາສາດ ສາມາດນຳໃຊ້ເຂົ້າໃນການປູກໄມ້ອຸດສາຫະກຳ, ໄມ້ພື້ນ, ໄມ້ໃຫ້ໝາກ, ລ້ຽງສັດເພື່ອໃຫ້ມີອາຊີບຄົງທີ່ ບໍ່ຖາງປ່າເຮັດໄຮ່ເລື່ອນລອຍ. ເມື່ອລັດມີຄວາມຈຳເປັນທີ່ຕ້ອງໄດ້ນຳໃຊ້ທີ່ດິນ ຂອງ

ປະຊາຊົນ ທີ່ນອນຢູ່ໃນຂອບເຂດສວນອຸທິຍານພຶກສາສາດ ລັດຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ແຕ່ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ໃຫ້ແກ່ປະຊາຊົນ ຢ່າງເໝາະສົມ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍທີ່ດິນ;

4) **ເຂດພັດທະນາເສດຖະກິດສັງຄົມ** ແມ່ນເຂດທີ່ກຳນົດໄວ້ ເພື່ອດຳເນີນກິດຈະການຕ່າງໆ ທີ່ທາງລັດຖະບານໄດ້ອະນຸມັດເຊັ່ນ: ການເຊົ່າ ຫຼື ສຳປະທານທີ່ດິນສວນອຸທິຍານພຶກສາສາດ, ສ້າງເຂື່ອນໄຟຟ້າ, ແຫຼ່ງທ່ອງທ່ຽວທາມະຊາດ, ປະຫວັດສາດ ແລະ ວັດທະນະທຳ ທີ່ເຫັນວ່າມີຜົນປະໂຫຍດອັນໃຫຍ່ຫຼວງຕໍ່ປະຊາຊົນພາຍໃນເມືອງ ແລະ ແຂວງ ໂດຍຜ່ານການສຶກສາຄົ້ນຄວ້າ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

## ໝວດທີ 3
## ການອະນຸລັກ, ພັດທະນາ ແລະ ນຳໃຊ້ສວນອຸທິຍານພຶກສາສາດ

**ມາດຕາ 11 ການອະນຸລັກ ແລະ ນຳໃຊ້**

- ການອະນຸລັກ ແລະ ນຳໃຊ້ ເພື່ອເປັນສະຖານທີ່ເປັນບ່ອນຄົ້ນຄວ້າວິໄຈດ້ານຊີວະນາງພັນ;
- ອະນຸລັກ ແລະ ນຳໃຊ້ ຕິດພັນກັບການທ່ອງທ່ຽວ, ທຳມະຊາດ;
- ອະນຸລັກ ແລະ ນຳໃຊ້ ເຮັດໃຫ້ຊັບພະຍາກອນທຳມະຊາດຍືນຍົງ, ມີຄວາມອຸດົມສົມບູນ, ບໍ່ສູນພັນ ແລະ ຖືກນຳໃຊ້ໄດ້ຢ່າງຍາວນານ.

**ມາດຕາ 12 ການພັດທະນາສວນອຸທິຍານພຶກສາສາດ**

ການພັດທະນາສວນອຸທິຍານພຶກສາສາດ ແມ່ນທຸກການເຄື່ອນໄຫວ ຢູ່ໃນຂອບເຂດສວນອຸທິຍານພຶກສາສາດ ເພື່ອປັບປຸງຄຸນນະພາບດິນ, ຟື້ນຟູບູລະນະປ່າໄມ້ ລວມທັງຊີວະນາງພັນຕາມທຳມະຊາດ ດ້ວຍການນຳໃຊ້ເຕັກນິກວິທະຍາສາດ ແນໃສ່ອະນຸລັກສິ່ງແວດລ້ອມ, ລະບົບນິເວດ, ພັນພືດ, ພັນສັດນ້ຳ-ສັດປ່າ, ວັດທະນະທຳ, ຮ່ອງຮອຍປະຫວັດສາດ ແລະ ສິ່ງທີ່ມີຄຸນຄ່າ ຢູ່ໃນຂອບເຂດສວນອຸທິຍານພຶກສາສາດ.

**ມາດຕາ 13 ແຫຼ່ງທຶນ ແລະ ການນຳໃຊ້ທຶນ**

ແຫຼ່ງທຶນພັດທະນາສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ ໄດ້ມາຈາກ:

1. ກອງທຶນພັດທະນາສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ;
2. ງົບປະມານຂອງລັດ;
3. ຄ່າບໍລິການເຂົ້າໄປທ່ຽວຊົມໃນເຂດສວນອຸທິຍານພຶກສາສາດ;
4. ສ່ວນແບ່ງຈາກຄ່າປັບໃໝ ຜູ້ກະທຳຜິດລະບຽບການຄຸ້ມຄອງສວນອຸທິຍານພຶກສາສາດ;
5. ພັນທະ, ຄ່າທຳນຽມຈາກການດຳເນີນກິດຈະການ ຫຼື ທຸລະກິດ ຢູ່ໃນຂອບເຂດສວນອຸທິຍານພຶກສາສາດ;
6. ການປະກອບສ່ວນຂອງບຸກຄົນ, ລວມໝູ່, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອື່ນໆ.

ທຸກແຫຼ່ງທຶນຕ້ອງຜ່ານລະບົບຄັງເງິນຕາມລະບຽບການຂອງການເງິນ; ກອງທຶນພັດທະນາສວນອຸທິຍານພຶກສາສາດ ໃຫ້ນຳໃຊ້ເຂົ້າໃນວຽກງານຄຸ້ມຄອງ, ພັດທະນາ, ອະນຸລັກ ແລະ ປົກປັກຮັກສາ ສວນອຸທິຍານພຶກສາສາດ ຂອງແຂວງ ເປັນຕົ້ນ: ວຽກງານຈັດສັນສວນອຸທິຍານພຶກສາສາດ, ຄົ້ນຄວ້າທົດລອງ, ຕິດຕາມກວດກາ, ປ້ອງກັນໄຟໄໝ້ລາມປ່າ, ວຽກງານໂຄສະນາອົບຮົມນະໂຍບາຍ, ລະບຽບການ, ເຜີຍແຜ່ກົດໝາຍ ແລະ ວຽກງານສວນອຸທິຍານພຶກສາສາດ.

**ມາດຕາ 14 ຂອບເຂດລວມຂອງສວນອຸທິຍານພຶກສາສາດ**

ສວນອຸທິຍານພຶກສາສາດຜາຊ້າງ-ຜາຂີ້ໝົ້ນ ແຂວງໄຊຍະບູລີ ຕັ້ງຢູ່ທິດຕາເວັນອອກຂອງເມືອງໄຊຍະບູລີ ມີເນື້ອທີ່ທັງໝົດ 19.561,79 ເຮັກຕາ, ມີລວງຮອບ 120 ກິໂລແມັດ ແລະ ຕິດກັບ 13 ບ້ານຄື: ບ້ານຕາລານ, ບ້ານໃຫຍ່ພັດທະນານາຫຼາ, ບ້ານນາແລ້ງຫຼວງ, ບ້ານນາລາ, ບ້ານນາຍາວ, ບ້ານນາໄຮ, ບ້ານໜອງແຊງ, ບ້ານນາຕໍ່ໃຫຍ່, ບ້ານນາຊໍ່ຜາຊ້າງ, ບ້ານຫ້ວຍແກ້ງ, ບ້ານປາກຮຸ່ງ, ບ້ານຫ້ວຍຂີວຫຼວງ ແລະ ບ້ານນາທັງ.

- ທິດເໜືອ ຕິດກັບເຂດບ້ານຕາລານ, ບ້ານໃຫຍ່ພັດທະນານາຫຼາ;
- ທິດໃຕ້ ຕິດກັບເຂດບ້ານນາທັງ ແລະ ບ້ານຫ້ວຍຂີວຫຼວງ;
- ທິດຕາເວັນອອກ ຕິດກັບນ້ຳຂອງ ແລະ ເຂດບ້ານປາກຮຸ່ງ, ບ້ານຫ້ວຍຂີວຫຼວງ;
- ທິດຕາເວັນຕົກ ຕິດກັບບັນດາບ້ານໃນເທດສະບານເມືອງໄຊຍະບູລີ 8 ບ້ານເຊັ່ນ: ບ້ານນາແລັ້ງຫຼວງ, ບ້ານນາລາ, ບ້ານນາຍາວ, ບ້ານນາໄຮ, ບ້ານ ໜອງແຊງ, ບ້ານນາຕໍ່ໃຫຍ່ ບ້ານນາຊ່ຳພາຊ້າງ, ບ້ານຫ້ວຍແກ້ງ (ມີແຜນທີ່ຄັດຕິດຊ້ອນທ້າຍ)

## ໝວດທີ 4
## ຄະນະກຳມະການຄຸ້ມຄອງ

**ມາດຕາ 15 ຄະນະກຳມະການຄຸ້ມຄອງ**

ຄະນະກຳມະການຄຸ້ມຄອງ ແລະ ກວດກາສວນອຸທິຍານພຶກສາສາດປະກອບມີ:

| | | |
|---|---|---|
| 1) | ຮອງເຈົ້າແຂວງໄຊຍະບູລີ | ເປັນຫົວໜ້າ |
| 2) | ຫົວໜ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ | ເປັນຮອງ |
| 3) | ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ | ເປັນຄະນະ |
| 4) | ຮອງຫົວໜ້າພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ | ເປັນຄະນະ |
| 5) | ຮອງຫົວໜ້າພະແນກສາທາລະນະສຸກ | ເປັນຄະນະ |
| 6) | ຮອງຫົວໜ້າພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ | ເປັນຄະນະ |
| 7) | ຮອງຫົວໜ້າກອງບັນຊາການທະຫານແຂວງ | ເປັນຄະນະ |
| 8) | ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ | ເປັນຄະນະ |
| 9) | ຮອງເຈົ້າເມືອງ ເມືອງໄຊຍະບູລີ | ເປັນຄະນະ |
| 10) | ນາຍບ້ານ 13 ບ້ານທີ່ມີເຂດແດນຕິດພື້ນທີ່ | ເປັນຄະນະ |

**ມາດຕາ 16 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງ**

1) ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ສາມາດຮຽກປະຊຸມບັນດາພາກສ່ວນທີ່ກ່ຽວຂ້ອງ ສະຫຼຸບລາຍງານ, ປະເມີນຜົນການຈັດຕັ້ງປະຕິບັດແຕ່ລະໄລຍະ.
2) ປະສານສົມທົບກັບການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງ, ມີທິດຊີ້ນຳໃນການຈັດຕັ້ງປະຕິບັດ.
3) ຕິດຕາມກວດກາ ຊຸກຍູ້ຕໍ່ບຸກຄົນ, ນິຕິບຸກຄົນ ເຂົ້າມາຄົ້ນຄວ້າ ວິໄຈ ຫຼື ທ່ອງທ່ຽວທຳມະຊາດ ໃນສວນອຸທິຍານພຶກສາສາດ.
4) ມີສິດສະເໜີແຕ່ງຕັ້ງ, ປົດຕຳແໜ່ງກອງເລຂາ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ**

1) ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງໃນການຊີ້ນຳ, ນຳພາການວາງແຜນຈັດສັນ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານສວນອຸທິຍານພຶກສາສາດ ໂດຍປະສານສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງ, ອົງການປົກຄອງເມືອງ, ບ້ານ ແລະ ການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ.
2) ຄົ້ນຄວ້າ, ພິຈາລະນາ ແລະ ສະເໜີໃຫ້ຂັ້ນເທິງພິຈາລະນາ ກ່ຽວກັບການພັດທະນາ ຫຼື ການດຳເນີນກິດຈະການຕ່າງໆ ໃນຂອບເຂດສວນອຸທິຍານພຶກສາສາດ.
3) ພົວພັນ ແລະ ຮ່ວມມືກັບຜູ້ປະກອບການກ່ຽວກັບການດຳເນີນກິດຈະການ ໃນຂອບເຂດສວນອຸທິຍານພຶກສາສາດ.

4) ສົ່ງເສີມການຄົ້ນຄວ້າ, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນພື້ນຖານເຂົ້າໃນວຽກງານສວນອຸທິຍານພຶກສາສາດ.
5) ປົກປັກຮັກສາສິ່ງແວດລ້ອມ ກ່ຽວກັບການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ.
6) ໂຄສະນາ, ເຜີຍແຜ່ລະບຽບການຕ່າງໆ ກ່ຽວກັບວຽກງານສວນອຸທິຍານພຶກສາສາດ.
7) ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ໃນຂົງເຂດວຽກງານສວນອຸທິຍານພຶກສາສາດ.
8) ສະຫຼຸບ, ສັງລວມວຽກງານສວນອຸທິຍານພຶກສາສາດ ແລ້ວລາຍງານໃຫ້ຄະນະກໍາມະການຄຸ້ມຄອງສວນອຸທິຍານພຶກສາສາດ ຢ່າງເປັນປົກກະຕິ.
9) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກກະສິກໍາ ແລະ ປ່າໄມ້

1) ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດສວນອຸທິຍານພຶກສາສາດ.
2) ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານສວນອຸທິຍານພຶກສາສາດ.
3) ຄົ້ນຄວ້າ ແລະ ມີຄໍາເຫັນກ່ຽວກັບການດໍາເນີນກິດຈະການ, ເຊົ່າ ຫຼື ສໍາປະທານທີ່ດິນ ໃນຂອບເຂດສວນອຸທິຍານພຶກສາສາດ.
4) ຈັດຕັ້ງໜ່ວຍກວດກາສວນອຸທິຍານພຶກສາສາດ, ປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງ.
5) ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານກິດຈະການປ່າໄມ້ ໃນຂົງເຂດວຽກງານສວນອຸທິຍານພຶກສາສາດ.
6) ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານສວນອຸທິຍານພຶກສາສາດ ແລ້ວລາຍງານໃຫ້ຄະນະກໍາມະການຄຸ້ມຄອງສວນອຸທິຍານພຶກສາສາດຂອງແຂວງ ຢ່າງເປັນປົກກະຕິ.
7) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 19 ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ

1) ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບການ, ແຜນການປົກປັກຮັກສາສິ່ງແວດລ້ອມ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ການຄວບຄຸມມົນລະພິດ ໃນເຂດສວນອຸທິຍານພຶກສາສາດ.
2) ໂຄສະນາເຜີຍແຜ່ລະບຽບກົດໝາຍກ່ຽວກັບສິ່ງແວດລ້ອມໃຫ້ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດຢ່າງຕັ້ງໜ້າ.
3) ຮັບຄໍາສະເໜີ ແລະ ການລາຍງານບັນຫາສິ່ງແວດລ້ອມ ຈາກປະຊາຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.
4) ເກັບກໍາ, ສັງລວມ, ສຶກສາຄົ້ນຄວ້າ, ວິໄຈຂໍ້ມູນດ້ານສິ່ງແວດລ້ອມ ເພື່ອກໍານົດວິທີການ ແລະ ມາດຕະການປ້ອງກັນ, ແກ້ໄຂ, ບູລະນະ, ຟື້ນຟູສິ່ງແວດລ້ອມ ໃນເຂດສວນອຸທິຍານພຶກສາສາດ.
5) ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານສິ່ງແວດລ້ອມ ໃນຂົງເຂດວຽກງານສວນອຸທິຍານພຶກສາສາດ.
6) ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໃນເຂດສວນອຸທິຍານພຶກສາສາດ ແລ້ວລາຍງານໃຫ້ຄະນະກໍາມະການຄຸ້ມຄອງສວນອຸທິຍານພຶກສາສາດຂອງແຂວງ ຢ່າງເປັນປົກກະຕິ.
7) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 20 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ

1) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງສໍາຫຼວດ, ເກັບກໍາຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາ ແຫຼ່ງທ່ອງທ່ຽວ ທາງວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ໃນຂອບເຂດສວນອຸທິຍານພຶກສາສາດ.

2) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າຄຳຮ້ອງຂໍດຳເນີນກິດຈະການທ່ອງທ່ຽວ ໃນເຂດສວນອຸທິຍານພືກສາສາດ ແລະ ສະເໜີຕໍ່ອົງການປົກຄອງແຂວງ ເພື່ອພິຈາລະນາ.

3) ໂຄສະນາ, ເຜີຍແຜ່ ແຫຼ່ງທ່ອງທ່ຽວ ໃຫ້ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ຮູ້ຈັກ, ເປັນຈຸດທ່ອງທ່ຽວທີ່ໜ້າສົນໃຈ, ຕ້ອງການມາທ່ຽວຊົມ ແລະ ສຶກສາຮຽນຮູ້ ທຳມະຊາດ.

4) ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານການທ່ອງທ່ຽວ ໃນຂົງເຂດວຽກງານສວນອຸທິຍານພືກສາສາດ.

5) ສະຫຼຸບ ແລະ ລາຍງານການປະຕິບັດໜ້າທີ່ວຽກງານສົ່ງເສີມການທ່ອງທ່ຽວ ໃນເຂດສວນອຸທິຍານພືກສາສາດ ໃຫ້ຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດຂອງແຂວງ ຢ່າງເປັນປົກກະຕິ.

6) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ**

1) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີປະເພດຢາພື້ນເມືອງ ພ້ອມທັງວາງແຜນປົກປັກຮັກສາ ຊັບພະຍາກອນທຳມະຊາດທີ່ເປັນຢາ ໃນເຂດສວນອຸທິຍານພືກສາສາດ.

2) ຄົ້ນຄວ້າ, ວິໄຈ ຊັບພະຍາກອນທຳມະຊາດທີ່ເປັນຢາ ໃນຂອບເຂດສວນອຸທິຍານພືກສາສາດ ເພື່ອເປັນຢາປົວພະຍາດ.

3) ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດທີ່ເປັນຢາ ໃນຂອບເຂດສວນອຸທິຍານພືກສາສາດ.

4) ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານຊັບພະຍາກອນທຳມະຊາດທີ່ເປັນຢາ ໃນຂົງເຂດວຽກງານສວນອຸທິຍານພືກສາສາດ.

5) ສະຫຼຸບ ແລະ ລາຍງານການປະຕິບັດໜ້າທີ່ວຽກງານຄົ້ນຄວ້າ, ວິໄຈ, ສຳຫຼວດ ຊັບພະຍາກອນທຳມະຊາດທີ່ເປັນຢາ ໃຫ້ຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດຂອງແຂວງ ຢ່າງເປັນປົກກະຕິ.

6) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ**

1) ລະດົມກຳລັງອອກເຄື່ອນໄຫວ ເຂົ້າໃນການກວດກາ, ປ້ອງກັນ, ສະກັດກັ້ນ, ຕອບຕ້ານ ເຫດການບໍ່ດີທີ່ເກີດຂຶ້ນໃນຂອບເຂດສວນອຸທິຍານພືກສາສາດ ຢ່າງທັນການ.

2) ຊີ້ນຳການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເຂົ້າໃນວຽກງານສວນອຸທິຍານພືກສາສາດ.

3) ປ້ອງກັນຜູ້ນຳ ພັກ, ລັດຂັ້ນຕ່າງໆ, ແຂກຕ່າງປະເທດ, ທີ່ຕັ້ງກິດຈະການ, ກອງປະຊຸມ, ງານສຳຄັນຕ່າງໆ ທີ່ຈັດຢູ່ໃນຂອບເຂດສວນອຸທິຍານພືກສາສາດ.

4) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສວນອຸທິຍານພືກສາສາດ.

5) ສະຫຼຸບ, ລາຍງານ ການປະຕິບັດວຽກງານຂອງຕົນ ຕໍ່ຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດ.

6) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງໄຊຍະບູລີ**

1) ຊີ້ນຳ, ຊຸກຍູ້, ປຸກລະດົມ ແລະ ຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ ຂອງອົງການປົກຄອງບ້ານ ກ່ຽວກັບວຽກງານຂອງສວນອຸທິຍານພືກສາສາດ.

2) ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ໃນເຂດສວນອຸທິຍານພືກສາສາດ.

3) ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາ, ອະນຸລັກ ແລະ ປົກປັກຮັກສາສວນອຸທິຍານພືກສາສາດຢູ່ໃນເມືອງຂອງຕົນ.

4) ສະຫຼຸບ ແລະ ລາຍງານການປະຕິບັດວຽກງານຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາສວນອຸທິຍານພືກສາສາດ ໃຫ້ຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດຂອງແຂວງ ຢ່າງເປັນປົກກະຕິ.

5) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ 13 ບ້ານ.**

1) ຄົ້ນຄວ້າ, ເຊື່ອມຊຶມ ແລະ ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການຄຸ້ມຄອງສວນອຸທິຍານພືກສາສາດ ແລະ ນິຕິກຳອື່ນໆ ໃຫ້ປະຊາຊົນພາຍໃນບ້ານຂອງຕົນ.

2) ສຶກສາອົບຮົມ, ປູກລະດົມ, ເຕົ້າໂຮມຄວາມສາມັກຄີ ຂອງປະຊາຊົນບັນດາເຜົ່າ, ຊຸກຍູ້ການອະນຸລັກ ແລະ ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ໃນເຂດສວນອຸທິຍານພືກສາສາດ ທີ່ຕິດພັນກັບບ້ານຂອງຕົນ.

3) ຄຸ້ມຄອງ, ບູລະນະ ແລະ ປົກປັກຮັກສາເຂດນ້ຳແດນດິນ, ປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ, ສິ່ງແວດລ້ອມ, ແຫຼ່ງທ່ອງທ່ຽວ ແລະ ສາທາລະນະສົມບັດອື່ນໆໃນເຂດບ້ານຂອງຕົນ.

4) ຄົ້ນຄວ້າບັນຫາທີ່ມີຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ, ເງື່ອນໄຂການດຳລົງຊີວິດ ແລະ ຜົນປະໂຫຍດລວມຂອງບ້ານ ທີ່ຢູ່ໃນຂອບເຂດສວນອຸທິຍານພືກສາສາດ.

5) ຮ່ວມມື ແລະ ອຳນວຍຄວາມສະດວກໃຫ້ເຈົ້າໜ້າທີ່ ໃນການເຄື່ອນໄຫວວຽກງານສວນອຸທິຍານພືກສາສາດ.

6) ພົວພັນ, ປະສານສົມທົບກັບບ້ານໃກ້ຄຽງ, ອົງການປົກຄອງເມືອງ, ພະແນກການທີ່ໄດ້ຮັບການແຕ່ງຕັ້ງເປັນຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດ ໃນການປະຕິບັດວຽກງານສວນອຸທິຍານພືກສາສາດ.

7) ສະຫຼຸບ ແລະ ລາຍງານການປະຕິບັດວຽກງານຂອງຕົນ ໃນການຄຸ້ມຄອງສວນອຸທິຍານພືກສາສາດ ໃຫ້ອົງການປົກຄອງເມືອງ ຫຼື ຄະນະກຳມະການຄຸ້ມຄອງສວນອຸທິຍານພືກສາສາດຂອງແຂວງ ຢ່າງເປັນປົກກະຕິ.

8) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 25 ຄະນະກອງເລຂາ**

**ຄະນະກອງເລຂາປະກອບມີ:**

1) ຮອງຫົວໜ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ ເປັນຫົວໜ້າ.

2) ຫົວໜ້າຂະແໜງວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ເປັນຮອງ.

3) ວິຊາການຂະແໜງວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ 5 ທ່ານ ເປັນຄະນະ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງກອງເລຂາ**

- ສ້າງແຜນການ ແລະ ແຜນງົບປະມານເພື່ອຮັບໃຊ້ໃນການສ້າງຮ່າງຂໍ້ຕົກລົງ.
- ເກັບກຳ ແລະ ຄົ້ນຄວ້າວິໄຈຂໍ້ມູນ.
- ກຳນົດໂຄງປະກອບ ແລະ ຂຽນເນື້ອໃນຮ່າງຂໍ້ຕົກລົງ.
- ສະຫຼຸບລາຍງານຄະນະຮັບຜິດຊອບ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳດັ່ງນີ້:

1) ດຳເນີນການຂຸດຄົ້ນໄມ້ທຳມະຊາດ, ຂຸດຄົ້ນແຮ່ທາດ, ສ້າງເຂື່ອນເກັບນ້ຳ, ກໍ່ສ້າງກິດຈະກຳຕ່າງໆ, ສ້າງຖະໜົນຫົນທາງ, ຕັດຕົ້ນໄມ້ ໂດຍບໍ່ໄດ້ຮັບອະນຸຍາດ; ເກັບກູ້ເຄື່ອງປ່າຂອງດົງທີ່ມີລັກສະນະດັບສູນ, ລ່າສັດນ້ຳ-ສັດປ່າປະເພດຫວງຫ້າມ,ເຄື່ອນຍ້າຍພັນພືດ, ພັນສັດ ແລະ ດຳເນີນກິດຈະການອື່ນໆ ໃນເຂດສວນອຸທິຍານພຶກສາສາດ;

2) ຈັບຈອງ, ຊື້-ຂາຍສິດນຳໃຊ້ເນື້ອທີ່ດິນ, ເຂົ້າຕັ້ງບ້ານເຮືອນ, ບຸກເບີກຂະຫຍາຍເນື້ອທີ່, ການຖາງປ່າເຮັດໄຮ່, ຕັດຕົ້ນໄມ້ເຜົາຖ່ານ ແລະ ອື່ນໆ ໃນຂອບເຂດສວນອຸທິຍານພຶກສາສາດ ແລະ ເຂດເຊື່ອມຕໍ່;

3) ທຳການຂຸດຄົ້ນ, ຂຸດເຈາະດິນ, ຫີນພູ ຫຼື ຍົກຍ້າຍວັດຖຸບູຮານ, ວັດຖຸທີ່ມີຄຸນຄ່າທາງດ້ານປະຫວັດສາດ, ວັດທະນະທຳ ໃນຂອບເຂດສວນອຸທິຍານພຶກສາສາດ;

4) ນຳເອົາສິ່ງເປິເປື້ອນ, ທາດເປັນພິດ ສານເຄມີ ທີ່ຈະເປັນອັນຕະລາຍຕໍ່ແຫຼ່ງນ້ຳ, ປ່າໄມ້, ສັດນ້ຳ-ສັດປ່າ ແລະ ສິ່ງແວດລ້ອມ ເຂົ້າໄປໃນຂອບເຂດສວນອຸທິຍານພຶກສາສາດ ແລະ ເຂດເຊື່ອມຕໍ່ຢ່າງເດັດຂາດ;

5) ເຄື່ອນຍ້າຍ ຫຼື ປ່ຽນແປງປ້າຍຫຼັກໝາຍເຂດແດນ ແລະ ເຄື່ອງໝາຍອື່ນໆ ທີ່ກ່ຽວຂ້ອງກັບວຽກງານສວນອຸທິຍານພຶກສາສາດ.

6) ສ້າງອຸປະສັກກີດຂວາງ, ແຊກແຊງການເຮັດວຽກ ຂອງຄະນະກຳມະການຄຸ້ມຄອງສວນອຸທິຍານພຶກສາສາດ.

7) ໃຫ້ສິນບົນ, ສົມຮູ້ຮ່ວມຄິດ, ຊ່ວຍເຫຼືອ, ປົກບັງ, ຊຸກເຊື່ອງຜູ້ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 28 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ ມີພຶດຕິກຳດັ່ງນີ້:

1) ຫ້າມຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງ ລົງປະຕິບັດໜ້າທີ່ໂດຍພາລະການ;

2) ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

3) ປະຕິບັດໜ້າທີ່ດ້ວຍຄວາມບໍ່ຍຸຕິທຳ, ລຳອຽງຕໍ່ບຸກຄົນ ແລະ ການຈັດຕັ້ງ ທີ່ມາເຄື່ອນໄຫວຢູ່ໃນສວນອຸທິຍານພຶກສາສາດ;

4) ປະລະໜ້າທີ່, ຂາດຄວາມຮັບຜິດຊອບ, ເມີນເສີຍຕໍ່ການປະຕິບັດໜ້າທີ່, ຮັບສິນບົນ, ແກ່ຍາວເວລາ, ຖ່ວງດຶງເອກະສານ, ແກ້ໄຂວຽກງານໂດຍບໍ່ຖືກຕ້ອງຕາມລະບຽບຫຼັກການ;

5) ເຂົ້າຮ່ວມການດຳເນີນທຸລະກິດກ່ຽວກັບການຂຸດຄົ້ນ, ຊື້-ຂາຍໄມ້ ແລະ ຜະລິດຕະພັນປ່າໄມ້.

6) ມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ຂໍ້ຫ້າມ ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການຮ່ວມມື, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດວຽກງານສວນອຸທິຍານພືກສາສາດ ແລະ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດໍາເນີນຄະດີ ຕາມກົດໝາຍຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

1) ມອບໃຫ້ຄະນະກໍາມະການກວດການ ແລະ ຄຸ້ມຄອງ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.
2) ມອບໃຫ້ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງ, ອົງການປົກຄອງເມືອງໄຊຍະບູລີ, ອົງການປົກຄອງບ້ານ ເປັນເຈົ້າການຮັບຜິດຊອບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ